ທະນາຄານຮ່ວມພັດທະນາ

| Position ID: | EXC_CASHIER/CASH |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** **ພະນັກງານ ຄັງເງິນສົດ**

**Position Name:** ***Cashier***

❖ <u>ໜ້າທີ່ຮັບຜິດຊອບຫຼັກ (ToR):</u>

- ຮັບ-ຈ່າຍ ເງິນສະກຸນຕ່າງໆ (ກີບ, ບາດ, ໂດລາ) ແລະ ການ ເປີດ-ປິດຄັງເງິນສົດ (Super Till);
- ເບີກຈ່າຍເງິນສົດອອກຄັງໃຫຍ່ ຈ່າຍໃຫ້ໜ່ວຍ, ສຳນັກງານໃຫຍ່, ຂະແໜງ ATM ແລະ ກຽມໄວ້ບໍລິການລູກຄ້າ;
- ຮັບ/ອະນຸມັດເງິນ ໃຫ້ກັບ Teller ສູນ/ໜ່ວຍ/ບູດ ບໍລິການທີ່ຂໍເງິນຜ່ານລະບົບ Flexcube;
- ກວດກາຈຳນວນ ແລະ ຄຸນນະພາບຂອງເງິນສົດ ຈາກລູກຄ້າກ່ອນນຳເຂົ້າຄັງ;
- ຄັດແຍກເງິນ (ດ້ວຍເຄື່ອງຈັກ/ດ້ວຍມື) ກ່ອນນຳໃສ່ກ່ອງຕູ້ ເອທີເອັມ ຫຼື ສົ່ງໄປ ທຫລ ຕາມການມອບໝາຍ;
- ໄປຝາກ-ຖອນ ຫຼື ປ່ຽນເງິນຢູ່ BOL;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ <u>ວຸດທິການສຶກສາ (Academic Background):</u>

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ <u>ປະລິນຍາຕີ</u> ຂຶ້ນໄປໃນສາຂາວິຊາ:
  - ການບັນຊີ;
  - ການເງິນ-ການທະນາຄານ;
  - ບໍລິຫານຄຸ້ມຄອງ;
  - ເສດຖະສາດ ຫຼື ສາຂາອື່ນທີ່ກ່ຽວຂ້ອງ.

❖ <u>ກ່ຽວກັບຜູ້ສະໝັກ (About Applicant):</u>

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ເປັນຄົນທີ່ມີມະນຸດສຳພັນດີ, ສາມາດຕິດຕໍ່ປະສານງານກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດໄດ້ທຸກລະດັບ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະຫຼະພາບມາກ່ອນ;
- ມີຄວາມຮູ້ ຄວາມສາມາດໃນການໃຊ້ຄອມພິວເຕີ, ການນຳໃຊ້ MS Office ແລະ Excel ໃນລະດັບດີ;
- ຜູ້ສະໝັກຈະຕ້ອງສາມາດເດີນທາງໄປວຽກຕ່າງແຂວງໄດ້ເປັນບາງໄລຍະ;
- ຕ້ອງມີຄວາມສາມາດ ໃນການສື່ສານເປັນທັງພາສາລາວ ແລະ ອັງກິດ ຫຼື ພາສາຕ່າງປະທດໃດໜຶ່ງເພີ່ມ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.